ຄຳຈັນ ປຣະດິດ

# ໃ ແລະ... ໄ




1971

*ທ່ານຜູ້ອ່ານທີ່ຮັກແລະເຄົາຣົບ*

ຫລາຍຄົນໄດ້ຂຽນໄມ້ມ້ວນ ສຣະ ໃ× ແລະ ໄມ້ມາຍ ສຣະ ໄ× ຜິດ ໆ ຖືກ ໆ ບໍ່ວ່າຢູ່ໜັງສືຣາຊການຫລືໜັງສືພິມເອກຊົນກໍຕາມ ສະນັ້ນ ຂ້າພະເຈົ້າຈິ່ງຢາກຂໍອະທິບາຍວິທີໃຊ້ ແລະຄວາມໝາຍຂອງສຣະ ໃ× ແລະ ໄ× ນີ້ຢ່າງແຈ່ມແຈ້ງ ເພື່ອຊ່ວຍໃຫ້ຜູ້ຂຽນໃຊ້ໃຫ້ຖືກຕ້ອງແທ້ ໂດຍສະເພາະພວກຮ່ວມຊາດລາວພາກກາງແລະໃຕ້ ຈຶ່ງຂຽນສຣະ ໃ× ແລະ ໄ× ສັບປົນກັນໝົດ ຍ້ອນວ່າອ່ານອອກສຽງສຣະ ໄ× ໝົດ ຈຶ່ງເຂົ້າໃຈວ່າ ຈະຂຽນ ສຣະ ໃ× ຫລື ໄ× ໃສ່ສັບໃດກໍບໍ່ສຳຄັນ.

*– ຄຳຈັນ ປຣະດິດ –*

ໄມ້ ໃ× ໃຊ້ປະກອບສັບຕ່າງ ໆ ທັງໝົດ ໒໙ (ຊາວເກົ້າ) ຄຳເທົ່ານັ້ນ ເຫລືອ ໒໙ ຄຳແລ້ວແມ່ນໃຊ້ ໄມ້ ໄ× ໝົດ ສັບທີ່ໃຊ້ ໄມ້ ໃ× ໒໙ ຄຳນັ້ນມີດັ່ງຕໍ່ໄປນີ້:

໑– *ໃກ້* : ແປວ່າ ບໍ່ ຫລື ບໍ່ໄກ

* ຢ່າຫລົງກັບ *ໄກ້* ຊຶ່ງແມ່ນໂຕຟານນ້ອຍຈະມີຕນັ້ງ ມີແດ່ງຂາລີບ ໆ (ໂຕໄກ້ ລາບໄກ້....)

໒– *ໃຄ* : ມາຈາກຫົວສີໃດ ຫລື ຫົວຂີ້ງໃດ (ບ້ານສີໃຄ ສ້າປາໃສ່ຂີ້ງໃຄ....)

* ຢ່າຫລົງກັບ *ໄຄ* ຊຶ່ງແມ່ນຂອງໂລໂດກຕິດຢູ່ນ້ຳດີງ (ຂີ້ໄຄ) ຫລືເສັ້ນຜັກຂຽວ ໆ ແບບເທົາແລະຄຸຍຢູ່ໃນນ້ຳ (ໄຄຫີນ–ໄຄທະເລ–ໄຄແຜ່ນ....) ຫລືວ່າ ອາການເບົາບາງລົງ (ໄຄແດ່)

໓– *ໃຄ່* : ແປວ່າໂພງຂຶ້ນ ເບົາບວມຂຶ້ນ (ຂາໃຄ່–ແຈ່ວໃຄ່)

* ຢ່າຫລົງກັບ *ໄຂ່* ຊຶ່ງຂຽນດ້ວຍ ໂຕ ຂ ແລະ ໄມ້ ໄ× (ໄຂ່ໄກ່–ອື້ວໄຂ່....)

໔– *ໃຄ້* : ປີທີ ໑໒ ຄືປີກຸນ ໃຊ້ໃນສໄມໂບຮານກ່ອນຝຣັ່ງເສດມາ (ປີໃຄ້ເດືອນ ໗)

* ຢ່າຫລົງກັບ *ໄຄ້* ຊຶ່ງໝາຍເຖິງໄລປືນຫລືພ້າ (ລັ້ນໄຄ້ປືນ–ໄຄ້ພ້າລັກລັ້ນ...) ຫລືຕົ້ນໄມ້ທີ່ເກີດຕາມຫາດ

(ກົກໄດ້)

໕– ໃງ່ : ອີ້ຟຸ່ນ ອີ້ໃງ່

໖– ໃຈ : ຫົວໃຈ–ໃຈດີ–ທຸກໃຈ....

໗– ໃຈ້ : ປີທີ່ ໑ ຫລືປີຈອດ ຊຶ່ງໃຊ້ໃນສໄມໂບຮານ (ປີໃຈ້ເດືອນຍີ່....)

* ຢ່າຫລົງກັບ ໄຈ້ ຊຶ່ງແປວ່າ ເລືອກອອກໃຫ້ເປັນຣະບຽບ (ໄຈ້ຜັກ–ໄຈ້ເຂົ້າເປືອກ....) ຫລືວ່າຊ້ຳ ໓ ກັນ (ປາກໄຈ້ ໓ ກໍຍັງບໍ່ຈື່....)

໘– ໃສ : ໃຊ້ຄວາມຖາມເຖິງທີ່ຢູ່ (ຢູ່ໃສ ? – ໄປໃສ ?) ຫລືກ່ຽວກັບສີແຈ້ງສວ່າງ (ນ້ຳໃສ–ປາກເວົ້າຍ່າງເສາະໃສດີ...)

* ຢ່າຫລົງກັບ ໄສ ຊຶ່ງແປວ່າ ເຮັດໃຫ້ຍ້າຍໄປທາງໜ້າ (ກວານຊ້າງໄສຊ້າງ–ໄສກົບໄມ້) ສົງ ໄສ (ບໍ່ດັກໃຈ) ອາ ໄສ (ເພິ່ງພາ)

໙– ໃສ່ : ວາງໃຫ້ຖືກບ່ອນ (ເອົາໃສ່–ໃສ່ໃຈ)

໑໐– ໃສ້ : ປີທີ່ ໖ ຄືປີມະເສງ ໃຊ້ໃນສໄມໂບຮານ (ປີໃສ້ເດືອນຈຽງ....)

* ຢ່າຫລົງກັບ ໄສ້ ຊຶ່ງແມ່ນລຳທີ່ໃຊ້ເປັນບ່ອນລະບາຍອາຫານ (ໄສ້ນ້ອຍ–ຂມົມອົ່ວໄສ້....)

໑໑– *ໃຊ່* : ໝາຍຄວາມວ່າ ໄດ້ ຕົວຢ່າງ ບໍ່ໃຊ່ແມ່ນ ບໍ່ໃຊ່ຖືກ ແປວ່າ ບໍ່ໄດ້ແມ່ນ ບໍ່ໄດ້ຖືກ....

* ຢ່າງຫລົງກັບ *ໄຊ່* ຊຶ່ງເປັນໝາກໄມ້ຊະນິດໝາກນ້ອຍ ນ້ອຍແຕ່ອື່ນ (ໝາກຜັກໄຊ່)

໑໒– *ໃຊ້* : ປະຕິບັດໃຫ້ຖືກໃຈ (ຄົນໃຊ້–ໃຊ້ສອຍ–ຮັບໃຊ້....)

* ຢ່າຫລົງກັບ *ໄຊ້* ຊຶ່ງແປວ່າທົດແທນ (ໄຊ້ໜີ້ໄຊ້ສິນ –ໄຊ້ເວນໄຊ້ກັມ....)

໑໓– *ໃຍ* : ເຄືອໄມ້ (ໃຍບົວຍູ່ງບົວ) ຍູ່ງຮັງສັດ (ໃຍແມງມູມ) ທ່ອງກັງອົມນ້ຳ (ທ່ອງໃຍ)

* ຢ່າຫລົງກັບ *ໄຍ* ຄືຢູ່ໃນຄຳ ໝາກຍ່າໄຍ ໝາກລຳໄຍ

໑໔– *ໃດ* : ໃຊ້ກັບຄຳຖາມ (ອັນໃດ ? ເຮັດຈັ່ງໃດ ? ຜູ້ໃດ ?)

* ຢ່າຫລົງກັບ *ໄດ* ຊຶ່ງໝາຍວ່າ ເນີ ຫລື ເດີ (ຂ້ອຍບໍ່ໄປນຳເຈົ້າໄດ !) ຂັ້ນໄດເຮືອນ–ທ້າວຂຸໄດ–ຜາໄດລີ້ຜີ....

໑໕– *ໃຕ* : ກະເພາະອາຫານສັດຈຳພວກນົກ (ໃຕໄກ່ ໃຕເປັດ ໃຕນົກຍຸງ...)

* ຢ່າຫລົງກັບ *ໄຕ* ຊຶ່ງໝາຍຄວາມວ່າສາມ ດັ່ງ ຕຣີ (ໄຕມາດ) ວັດຈອມໄຕ–ໄຕພິດົກ....

໑໖– *ໃຕ້* : ທາງຫລືທິດທີ່ກົງກັນຂ້າມກັບທາງຫລືທິດເໜືອ (ໄປ

ທາງໃຕ້—ໄທບ້ານໃຕ້)

* ຢ່າຫລົງກັບ *ໄຕ້* ຈຶ່ງແປວ່າຈູດໃຫ້ມີແສງຮຸ່ງ (ໄຕ້ທຽນ—ໄຕ້ໄຟ—ໄຕ້ຜາງຍາມ....)

໑໗— *ໃນ* : ຄຳກົງກັນຂ້າມກັບນອກ (ໃນເຮືອນ—ເຄື່ອງໃນສັດ—ທາງໃນ)

* ຢ່າຫລົງກັບ *ໄນ* ໝາຍ່າຈະມີດນຶ່ງ (ໝາໄນ ກິນແກະ) ປາຈະມີດນຶ່ງ (ປາໄນ) ແກ້ວຕາເປັນແສງ (ໄນຕາ) ຫລອດຝ້າຍຫລືໄໝ (ຝ້າຍສອງໄນ) ອັສໄນ (ມ້າ)....

໑໘— *ໃບ* : ໃບໄມ້—ໃບເງິນໃບຄຳ (ແຜ່ນເງິນແຜ່ນຄຳ) ຖ້ວຍສອງໃບ

* ຢ່າຫລົງກັບ *ໄບ* ຄຳໄບ —ຜ້າສະໄບ — ສະໄບຂອງຊ່າງໄມ້....

໑໙— *ໃບ້* : ຈ້າ ບໍ່ມີຄວາມສລາດ (ຄົນໃບ້ໃຊ້ຫລາຍເທື່ອ)

໒໐— *ໃຜ* : ຜູ້ໃດ ຕົວຢ່າງ ໃຜມາ ? ໃຜເປັນຫຍັງ ?

໒໑— *ໃຝ່* : ເອົາໃຈໃສ່ພິເສດ (ໃຝ່ໃຈ—ໃຝ່ຫາ—ມັກໃຝ່....)

໒໒— *ໃພ້* : ກົງກັນຂ້າມກັບຄຳວ່າ ເຂີຍ (ລູກໃພ້—ນ້ອງໃພ້...)

* ຢ່າຫລົງກັບ *ໄພ້* (ພ້າຍ) ບັດຈະມີດນຶ່ງທີ່ໃຊ້ໃນການພະນັນ (ຫລິ້ນໄພ້—ໄພ້ຕອງ....)

໔໓– *ໃຢ* : ຄວາມຕື່ນຕົກໃຈ ຈຶ່ງພາຍເຖິງ ໂຢວ ! ຮວາຍ !
(ໃຢ ! ຢ່າມາໃກ້ແໜ ! ໃຢ ! ຢຸດກ່ອນ)

໔໔– *ໃຫ້* : ສົ່ງຍື່ນໃຫ້ (ເອົາໃຫ້–ໃຫ້ພອນ...)
* ຢ່າຫລົງກັບ *ໄຫ້* ຊຶ່ງແປວ່າ ນ້ຳຕາອອກ ຄື ໄຫ້ນຳ –ຮ້ອງໄຫ້–ຂີ້ໄຫ້....

໔໕– *ໃຣ່* : ຕອນນຶ່ງ ພັ້ນນຶ່ງ (ມາໃຣ່ດຽວ–ມາໃຣ່ນີ້ມີແຕ່ຫຍ້າ)
* ຢ່າຫລົງກັບ *ໄຣ່* ຊຶ່ງເປັນສວນປູກເຄື່ອງຢູ່ຕີນພູ ຫລື ໂນນສູງ (ໄຣ່ເຂົ້າ–ໄຣ່ສາລີ)

໔໖– *ໃຫຍ່* : ກົງກັນຂ້າມກັບນ້ອຍ (ເຮືອນຫລັງໃຫຍ່–ເຈົ້ານາຍ ຜູ້ໃຫຍ່)

໔໗– *ໃໝ* : ບັ່ບຍ້ອນຜິດຣະບຽບກົດໝາຍ (ບັ່ບໃໝໃສ່ໂທດ)
* ຢ່າຫລົງກັບ *ໄໝ* ຊຶ່ງເປັນເສັ້ນມາຈາກຝັກຫລອກ ແລະໂຕມ້ອນ (ໄໝຄຳ–ສິ້ນໄໝ)

໔໘– *ໃໝ່* : ກົງກັນຂ້າມກັບເກົ່າ (ເຄື່ອງຂອງໃໝ່–ບຸນປີໃໝ່....)
* ຢ່າຫລົງກັບ *ໄໝ່* ຊຶ່ງມາສາໄທເພື່ອແປວ່າ ຊຽງ (ໄໝ່ຄຳພັນ–ໄໝ່ອິນຕາ....)

໔໙– *ໃຫລ* : ຜັ່ນໄປບໍ່ຮູ້ເມື່ອ (ຫລັບໃຫລ–ຫລົງໃຫລ–ໃຫລຕາຍ)
* ຢ່າຫລົງກັບ *ໄຫລ* ໄປຕາມສາຍນ້ຳ (ຝົນຕົກໄຫລ ລົງສາຍຄາ–ນ້ຳຫ້ວຍໄຫລ....) ເຫລັກປະເພດປະສົມ